ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 885 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ ໒໘ ກໍລະກົດ ໒໐໒໑

ກະຊວງອຸດສາຫະກຳ ແລະ ການຄ້າ
ຂາເຂົ້າ
ເລກທີ 13.51
ວັນທີ 02/8/21

# ແຈ້ງການ

ຮຽນ: - ທ່ານ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ທີ່ນັບຖື. ✓
- ທ່ານ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ທີ່ນັບຖື.
- ທ່ານ ລັດຖະມົນຕີກະຊວງການເງິນ ທີ່ນັບຖື.

ເລື່ອງ: ທິດຊີ້ນຳກ່ຽວກັບການປັບປຸງນິຕິກຳ, ກົນໄກການປະຕິບັດ ແລະ ການເກັບລາຍຮັບຈາກໄມ້ ແລະ ຜະລິດຕະພັນຈາກໄມ້.

- ອີງຕາມດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 93/ນຍ, ລົງວັນທີ 03 ມີນາ 2017;
- ອີງຕາມການລາຍງານຂອງກະຊວງອຸດສາຫະກຳ ແລະ ການຄ້າ ຕໍ່ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ໃນວັນທີ 20-21 ກໍລະກົດ 2021;
- ອີງຕາມການຕົກລົງ ແລະ ຊີ້ນຳຂອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ໃນວັນທີ 20-21 ກໍລະກົດ 2021.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນຳຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້:

1) ເຫັນດີໃຫ້ສົ່ງອອກຜະລິດຕະພັນ ທຸກຮູບແບບ (ປຸງແຕ່ງ ຫຼື ບໍ່ມີການປຸງແຕ່ງ) ຈາກໄມ້ປູກທຸກຊະນິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 36 ຂອງກົດໝາຍປ່າໄມ້ (ສະບັບປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ແລະ ດຳລັດວ່າດ້ວຍການສົ່ງເສີມການປູກໄມ້ເປັນສິນຄ້າ ເລກທີ 247/ລບ, ລົງວັນທີ 20 ສິງຫາ 2019 ແຕ່ໃຫ້ມີການກຳນົດໂກຕ້າສົ່ງອອກໃນແຕ່ລະປີ ບົນພື້ນຖານການອະນຸມັດຂອງລັດຖະບານ ແລະ ມີການຂຶ້ນທະບຽນສວນປູກ ຫຼື ໃບຢັ້ງຢືນສວນປູກ ຕາມລະບຽບການກ່ຽວຂ້ອງ.

2) ສຳລັບໄມ້ປູກໃຫ້ໝາກທຸກຊະນິດ ເຊັ່ນ: ຕົ້ນມີ້, ຕົ້ນຂາມ, ຕົ້ນມ່ວງ ແລະ ຕົ້ນໄມ້ໃຫ້ໝາກ ຊະນິດອື່ນໆ ທີ່ປະຊາຊົນໄດ້ປູກ ແລະ ປົກປັກຮັກສາມາເປັນເວລາດົນນານ ທີ່ມີຈຸດປະສົງຕັດ ແລະ ສົ່ງອອກ ນັ້ນ, ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ຄົ້ນຄວ້າ ແລະ ອອກນິຕິກຳສະເພາະ ເພື່ອເປັນບ່ອນອີງໃນການຄຸ້ມຄອງ ແລະ ສົ່ງເສີມການປູກ ແລະ ການສົ່ງອອກ ໃນສະເພາະໜ້າ ແລະ ຍາວນານ.

3) ເຫັນດີໃຫ້ເພີ່ມຂະໜາດໄມ້ ສຳລັບການສົ່ງອອກ 07 ລາຍການ ຄື:

- ໄມ້ປູພື້ນ ຊິ້ນກຽວ ເພີ່ມຂະໜາດຄວາມກວ້າງຈາກ 20 ຊມ ມາເປັນ 30 ຊມ;
- ໄມ້ແຜ່ນຮົ້ວ ເພີ່ມຂະໜາດຄວາມຍາວຈາກ 180 ຊມ ມາເປັນ 200 ຊມ;
- ໄມ້ວົງກົບ ປັບປຸງໃຫ້ສົ່ງອອກໄດ້ ໂດຍບໍ່ຜ່ານການປຸງແຕ່ງດ້ວຍການແລ່ນຮ່ອງບັງໃບ, ແຕ່ຕ້ອງຜ່ານຂັ້ນຕອນ ຂອງການປຸງແຕ່ງເຊັ່ນ: ອົບ, ກົບລຽບ, ຕັດມຸມລາກທີ່ວົງກົບ ຕົວຜູ້ ແລະ ຕົວແມ່ ທີ່ສາມາດປະກອບເປັນຊຸດ;
- ໄມ້ວົງກົບປ່ອງຢ້ຽມ ເພີ່ມຂະໜາດຄວາມໜາ ຈາກ 6 ຊມ ມາເປັນ 8 ຊມ;
- ໄມ້ວົງກົບປະຕູ ເພີ່ມຂະໜາດຄວາມໜາ ຈາກ 8 ຊມ ມາເປັນ 10 ຊມ;
- ໄມ້ລູກຕັ້ງ ຮູບຊົງສີ່ຫຼ່ຽມ ເພີ່ມຂະໜາດຄວາມໜາ ແລະ ຄວາມກວ້າງ ຈາກ (12X12) ຊມ ມາເປັນ (15X15) ຊມ;
- ໂຕະໜ້ານັ່ງໄມ້ແຜ່ນກຽວສຳເລັດຮູບ ເພີ່ມຂະໜາດຄວາມໜາ ຈາກ 5 ຊມ ມາເປັນ 10 ຊມ.

4) ເຫັນດີໃຫ້ເພີ່ມລາຍການຜະລິດຕະພັນໄມ້ ເພື່ອການສົ່ງອອກ ເຂົ້າໃໝ່ 02 ລາຍການຄື:

- ຜະລິດຕະພັນໄມ້ໃວງສິບສຳເລັດຮູບ;
- ຜະລິດຕະພັນໄມ້ ທີ່ເປັນຊິ້ນສ່ວນຂອງເຟີນີເຈີໄມ້ ພຽງຢ່າງດຽວ ກໍ່ສາມາດສົ່ງອອກໄດ້ ເຊັ່ນ: ສົ່ງອອກ ສະເພາະ ຂາໂຕະ, ຂາຕັ່ງ, ຂາຕຽງ ແລະ ອື່ນໆ ໂດຍບໍ່ຈຳເປັນຕ້ອງເປັນຊຸດເຟີນີເຈີ ສຳເລັດຮູບ. ແຕ່ທຸກຊິ້ນສ່ວນທີ່ໃຫ້ສົ່ງອອກ ຕ້ອງໄດ້ຜ່ານຂັ້ນຕອນຂອງການປຸງແຕ່ງ ດ້ວຍການກົບ, ຂັດ, ເຈາະຮູ ແລະ ຕັດຂະໜາດຕາມຮູບແບບຂອງຜະລິດຕະພັນໄມ້.

5) ສຳລັບລາຍການຜະລິດຕະພັນຫວາຍ ແມ່ນອະນຸຍາດໃຫ້ສົ່ງອອກໄດ້ ທັງເຄິ່ງສຳເລັດຮູບ ແລະ ສຳເລັດຮູບ, ສ່ວນໄມ້ປ່ອງ ແມ່ນບໍ່ໄດ້ປັບປຸງຫຍັງ ໃຫ້ສົ່ງອອກໄດ້ໃນທຸກຮູບແບບ ທີ່ມີການປຸງແຕ່ງ ຫຼື ບໍ່ມີການປຸງແຕ່ງ ກໍໄດ້.

6) ເຫັນດີໃຫ້ສົ່ງອອກໄມ້ຕົກຄ້າງຢູ່ທົ່ວປະເທດ ຈຳນວນ 258.117,36 (ສອງແສນຫ້າສິບແປດພັນໜຶ່ງຮ້ອຍສິບເຈັດ ຈຸດສາມສິບຫົກ) ແມັດກ້ອນ ແລະ ມີໄມ້ຊົ່ງເປັນນ້ຳໜັກ 376,39 (ສາມຮ້ອຍເຈັດສິບຫົກ ຈຸດ ສາມສິບເກົ້າ) ໂຕນ ໂດຍໃຫ້ເກັບຄ່າຊັກພິເສດ ແລະ ຄ່າອື່ນໆທີ່ຕິດພັນ, ໂດຍມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນໃຈກາງສົມທົບກັບກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງ ລົງສົມທົບກັບອົງການປົກຄອງທ້ອງຖິ່ນ ຂຶ້ນບັນຊີໄມ້ຕົກຄ້າງທັງໝົດ ໃຫ້ລະອຽດ, ພ້ອມທັງເຮັດສັນຍາການມອບພັນທະ ທັງກຳນົດເວລາການສົ່ງອອກ ໃຫ້ຊັດເຈນ ເພື່ອເປັນການລ້າງສາງໄມ້ຕົກຄ້າງທັງໝົດ ທີ່ມີໃນປັດຈຸບັນ ເພື່ອບໍ່ໃຫ້ມີຊ່ອງວ່າງສວຍໂອກາດ ຕັດໄມ້ມາເພີ່ມເຕີມອີກ.

7) ເຫັນດີໃຫ້ເກັບຄ່າຊັກພິເສດ ສຳລັບການສົ່ງອອກຜະລິດຕະພັນໄມ້ເລື່ອຍແປຮູບ (ໄມ້ຕີຕັບ, ໄມ້ເລື່ອຍແປຮູບ ແລະ ໄມ້ຊ໋ອຍ) ໃນອັດຕາ 30% ແລະ ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ໃນອັດຕາ 15%.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ຄຳເຈນ ວົງໂພສີ

ບ່ອນນຳສົ່ງ:

- ນາຍົກ-ຮອງນາຍົກລັດຖະມົນຕີ 04 ສະບັບ
- ຫ້ອງວ່າການສູນກາງພັກ 01 ສະບັບ
- ຫ້ອງວ່າການສຳນັກງານປະທານປະເທດ 01 ສະບັບ
- ຄະນະເລຂາທິການສະພາແຫ່ງຊາດ 01 ສະບັບ
- ກະຊວງແຜນການ ແລະ ການລົງທຶນ 01 ສະບັບ
- ອົງການກວດກາແຫ່ງລັດ 01 ສະບັບ
- ຄະນະ ຕສນຍ, ທ່ານລະ 01 ສະບັບ
- ກົມກ່ຽວຂ້ອງຂອງ ຫສນຍ, ບ່ອນລະ 01 ສະບັບ
- ສຳເນົາ 01 ສະບັບ